ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ພິທີເປີດໂຕໂຄງການຊໍາລະຍ່ອຍຂ້າມແດນລະຫວ່າງ ສປປ ລາວ ແລະ ສປ.ຈີນ ຜ່ານ QR code ທີ່ນະຄອນຊຽງໄຮ້, ສປ ຈີນ.




ໃນວັນທີ 19 ທັນວາ 2024 ທີ່ຜ່ານມາ ໄດ້ມີພິທີເປີດໂຕໂຄງການຊໍາລະຍ່ອຍຂ້າມແດນລະຫວ່າງ ສປປ ລາວ ແລະ ສປ.ຈີນ ຜ່ານ QR code ຊຶ່ງກໍ່ຄື ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈໍາກັດ (LAPNet) ແລະ ບໍລິສັດ ຢູນຽນເພ ສາກົນ (UPI) ທີ່ນະຄອນຊຽງໄຮ້, ສປ ຈີນ. ພິທີເປີດໂຕໂຄງການດັ່ງກ່າວ ຕ່າງໜ້າຝ່າຍລາວນໍາພາໂດຍ ທ່ານ ມະໂນລິດ ຊຸມພົນພັກດີ ວ່າການຫົວໜ້າກົມຄຸ້ມຄອງລະບົບການຊໍາລະ ທະນາຄານແຫ່ງ ສປປ ລາວ (ທຫລ), ປະທານສະພາບໍລິຫານ ບໍລິສັດ LAPNet ແລະ ຕ່າງໜ້າຝ່າຍຈີນນໍາພາໂດຍທ່ານ DONG junfeng ປະທານສະພາບໍລິຫານ UPI.

ການເປີດໂຕໂຄງການໃນຄັ້ງນີ້ ມີຄວາມໝາຍຄວາມສໍາຄັນຢ່າງຍິ່ງ ໃນດ້ານການຮ່ວມມືຂອງສອງຝ່າຍ ກໍ່ເພື່ອສົ່ງເສີມການໃຫ້ບໍລິການຊໍາລະຍ່ອຍຂ້າມແດນຜ່ານ QR Code ທັງສອງປະເທດ ເພື່ອອໍານວຍຄວາມສະດວກລະຫວ່າງສະມາຊິກຂອງບໍລິສັດ LAPNet ແລະ ສະມາຊິກຂອງບໍລິສັດ UPI ໃນທົ່ວໂລກ ຜ່ານ UnionPay

Application ນັ້ນກໍ່ເພື່ອອຳນວຍຄວາມສະດວກສະບາຍໃຫ້ແກ່ນັກທ່ອງທ່ຽວຈາກປະເທດຈີນ, ນອກນັ້ນຍັງສາມາດຮອງຮັບການຊໍາລະຜ່ານກະເປົາເງິນເອເລັກໂຕຣນິກຫຼາຍກວ່າ 160 ກະເປົາໃນ 37 ປະເທດທົ່ວໂລກທີ່ເຂົ້າຮ່ວມໂຄງການກັບ UPI. ການຮ່ວມມືກັນລະຫວ່າງ LAPNet ແລະ UPI ໃນການພັດທະນາລະບົບການຊໍາລະຍ່ອຍລະຫວ່າງປະເທດ ໄດ້ກໍານົດອອກເປັນສອງໄລຍະຄື: ສໍາລັບໃນໄລຍະທີ 1) ຈີນ ສະແກນ ລາວ ແມ່ນໄດ້ເປີດໃຫ້ບໍລິການຢ່າງເປັນທາງການໄປແລ້ວນັ້ນ ໂດຍມີຕົວແທນຮັບຊໍາລະທີ່ລົງທະບຽນເປັນຮ້ານຄ້າຂອງ 08 ທະນາຄານທຸລະກິດທີ່ເປັນສະມາຊິກບໍລິສັດ LAPNet ຄື: ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL), ທະນາຄານຮ່ວມພັດທະນາຈໍາກັດ (JDB), ທະນາຄານ ສົ່ງເສີມກະສິກໍາ ຈໍາກັດ (APB), ທະນາຄານ ເອັສທີ ຈໍາກັດ (STB), ທະນາຄານ ມາຣູຮານ ເຈແປນລາວ ຈໍາກັດ (MJBL), ທະນາຄານ ເອຊີລີດາລາວ ຈໍາກັດ (ACLEDA), ທະນາຄານ ພົງສະຫວັນ ຈໍາກັດ (PSV) ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ຈາກັດ (LVB) ພ້ອມມີທ່າອ່ຽງທີ່ຈະມີການເພີ່ມຂຶ້ນຂອງທະນາຄານພາຍໃນລາວໃນອະນາຄົດອັນໃກ້ນີ້. ໂດຍຮູບແບບການຮັບຊໍາລະ ແມ່ນຮັບຊໍາລະຈາກນັກທ່ອງທ່ຽວຊາວຈີນ ແລະ ຕ່າງປະເທດທົ່ວໂລກ ທີ່ນໍາໃຊ້ E-Wallet UnionPay Application (China mainland) ແລະ UnionPay Mobile Wallet Connect (International) ມາຊໍາລະຄ່າສິນຄ້າ ແລະ ບໍລິການ ພາຍໃນ ສປປ ລາວ.






ສໍາລັບການພັດທະນາໃນໄລຍະທີ 2) ລາວ ສະແກນ ຈີນ ແມ່ນຈະເປີດໃຫ້ບໍລິການໃນປີຕໍ່ໄປ. ຂີດໝາຍສໍາຄັນຂອງການຮ່ວມມືໃນຄັ້ງນີ້ ກໍເພື່ອສະໜັບສະໜູນການໃຊ້ສະກຸນເງິນທ້ອງຖິ່ນຂອງທັງສອງປະເທດ ແລະ ຍັງເປັນບາດກ້າວສໍາຄັນໃນການຍົກລະດັບລະບົບການຊໍາລະຂອງ ສປປ ລາວ ໃນຂອບເຂດພາກພື້ນ.

**ຂ່າວ-ພາບ: ກົມຄຸ້ມຄອງລະບົບຊໍາລະ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*